ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
---===)000(===---

ສຳນັກງານນາຍົກລັດຖະມົນຕີ ເລກທີ 259/ນຍ

ນະຄອນຫຼວງວຽງຈັນ, ວັນທີ 01.06.2010

# ດຳລັດ
## ວ່າດ້ວຍຄັງເງິນແຫ່ງຊາດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 02/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມ ໜັງສືສະເໜີຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 0913/ກງ, ລົງວັນທີ 29/04/2010.

ນາຍົກລັດຖະມົນຕີແຫ່ງ ສປປ ລາວ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການບໍລິຫານ ແລະ ການເຄື່ອນໄຫວວຽກງານຄັງເງິນແຫ່ງຊາດ ເພື່ອລວມສູນທຸກແຫຼ່ງເງິນຂອງລັດເຂົ້າໃນລະບົບຄັງເງິນແຫ່ງຊາດ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ, ເຮັດໃຫ້ການບໍລິການຂອງຄັງເງິນແຫ່ງຊາດ ມີປະສິດທິຜົນ, ວ່ອງໄວ, ໂປ່ງໃສ, ສາມາດກວດກາ ແລະ ກວດສອບໄດ້, ແນໃສ່ເຮັດໃຫ້ການຄຸ້ມຄອງການເງິນຂອງລັດ ມີຄວາມເຂັ້ມແຂງ ແລະ ປະກອບສ່ວນເຂົ້າໃນການສ້າງສາພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2. ຄັງເງິນແຫ່ງຊາດ**

ຄັງເງິນແຫ່ງຊາດ ແມ່ນການຈັດຕັ້ງບໍລິຫານວິຊາການ ທີ່ຄຸ້ມຄອງ-ບໍລິຫານເງິນຂອງລັດ ໃຫ້ລວມສູນ ເຂົ້າບັນຊີຄັງເງິນແຫ່ງຊາດ ຕາມລະບົບສາຍຕັ້ງ ໃນຂອບເຂດທົ່ວປະເທດ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບຕ່າງໆ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ແຫຼ່ງເງິນຂອງລັດ** ໝາຍເຖິງ ເງິນງົບປະມານແຫ່ງລັດ, ເງິນກູ້ຢືມ ແລະ ເງິນຊ່ວຍເຫຼືອລ້າ ຈາກພາຍໃນ ແລະຕ່າງປະເທດ, ຄັງກອງທຶນຂອງລັດ, ຄັງຂອງຫົວໜ່ວຍງົບປະມານ, ອົງການບໍລິຫານວິຊາການ, ເງິນຝາກຂອງວິສາຫະກິດຂອງລັດ ໃນລະບົບຄັງເງິນແຫ່ງຊາດ;
2. **ຜູ້ສັ່ງການ** ໝາຍເຖິງ ລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າແຂວງ, ເຈົ້າຄອງນະຄອນ ຊຶ່ງເປັນຜູ້ຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນງົບປະມານ ໃນຂະແໜງການ ແລະ ທ້ອງຖິ່ນຂອງຕົນ ຕາມການມອບໝາຍຂອງລັດຖະບານ;
3. **ນາຍບັນຊີຄັງເງິນແຫ່ງຊາດ** ໝາຍເຖິງ ພະນັກງານ-ລັດຖະກອນຄັງເງິນແຫ່ງຊາດ ຜູ້ທີ່ເຮັດໜ້າທີ່ຄຸ້ມຄອງບັນຊີ ໃນລະບົບຄັງເງິນແຫ່ງຊາດ;
4. **ນາຍບັນຊີແຫ່ງລັດ** ໝາຍເຖິງ ພະນັກງານ-ລັດຖະກອນ ຢູ່ບັນດາຫົວໜ່ວຍງົບປະມານ, ອົງການບໍລິຫານວິຊາການ ແລະ ກອງທຶນຂອງລັດ ທີ່ເຮັດໜ້າທີ່ຄຸ້ມຄອງບັນຊີ ຕາມການມອບໝາຍຂອງຜູ້ສັ່ງການ;
5. **ການຊຳລະລາຍຈ່າຍ** ໝາຍເຖິງ ການຈ່າຍເງິນລະຫວ່າງເຈົ້າໜີ້ ກັບ ລູກໜີ້ ຫຼື ການປະຕິບັດຂັ້ນຕອນການປົດໜີ້ ຈາກບັນຊີນີ້ ໄປໃສ່ບັນຊີອື່ນ ຊຶ່ງຄັງເງິນແຫ່ງຊາດ ເປັນຜູ້ບໍລິການ;
6. **ເງິນຝາກໃນລະບົບຄັງເງິນແຫ່ງຊາດ** ໝາຍເຖິງ ເງິນທີ່ຕິດພັນກັບງົບປະມານແຫ່ງລັດ ຂອງອົງການຈັດຕັ້ງລັດ, ກອງທຶນຂອງລັດ, ອົງການບໍລິຫານວິຊາການ ແລະ ວິສາຫະກິດຂອງລັດ ເພື່ອລໍຖ້າການສະສາງບັນຊີ;
7. **ເງິນຄ້ຳປະກັນ** ໝາຍເຖິງ ເງິນຂອງບຸກຄົນ, ນິຕິບຸກຄົນ ເພື່ອຄ້ຳປະກັນການປະມູນ, ການປະຕິບັດໂຄງການ ຫຼື ກິດຈະການໃດໜຶ່ງຂອງລັດ ເພື່ອລໍຖ້າການສະສາງບັນຊີ;
8. **ບັນຊີລວມສູນຄັງເງິນແຫ່ງຊາດ** ໝາຍເຖິງ ການລວມສູນທຸກບັນຊີເງິນຝາກຂອງອົງການຈັດຕັ້ງລັດ, ກອງທຶນຂອງລັດ, ອົງການບໍລິຫານວິຊາການ ທີ່ຝາກໄວ້ໃນລະບົບບັນຊີ ຢູ່ທະນາຄານຂອງລັດ ຫລື ສະຖາບັນການເງິນອື່ນ ພາຍໃຕ້ການຄຸ້ມຄອງຂອງຄັງເງິນແຫ່ງຊາດ;
9. **ຫົວໜ່ວຍງົບປະມານ** ໝາຍເຖິງ ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ທີ່ໄດ້ຮັບສິດຈາກລັດຖະບານໃນການສ້າງແຜນ, ການຈັດຕັ້ງປະຕິບັດ ແລະ ການສະຫຼຸບງົບປະມານແຫ່ງລັດ;
10. **ກອງທຶນຂອງລັດ** ໝາຍເຖິງ ອົງການຈັດຕັ້ງໜຶ່ງທີ່ໄດ້ຮັບອະນຸຍາດສ້າງຕັ້ງຈາກລັດຖະບານ ມີໜ້າທີ່ເກັບລາຍຮັບເຂົ້າງົບປະມານແຫ່ງລັດ ແລະ ປະຕິບັດລາຍຈ່າຍ ຕາມລະບຽບການທີ່ລັດຖະບານ ອະນຸມັດ;
11. **ສາງເງິນ** ໝາຍເຖິງ ບ່ອນເກັບມ້ຽນເງິນສົດ ແລະ ວັດຖຸມີຄ່າ;
12. **ວັດຖຸມີຄ່າ ແລະ ເອກະສານມີຄ່າ** ໝາຍເຖິງ ເງິນຮູບປະພັນ, ຄຳ, ເພັດ, ພອຍ ແລະ ວັດຖຸບູຮານ; ສ່ວນເອກະສານມີຄ່າ ແມ່ນໃບພັນທະບັດ, ສັນຍາໃຊ້ໜີ້, ໃບຢັ້ງຢືນຮຸ້ນ ແລະ ໃບຄ້ຳປະກັນ;
13. **ເງິນຝາກທີ່ຕິດພັນກັບງົບປະມານແຫ່ງລັດ** ໝາຍເຖິງ ເງິນຂອງຫົວໜ່ວຍງົບປະມານ, ກອງທຶນຂອງລັດ ແລະ ເງິນຂອງນິຕິບຸກຄົນ ທີ່ຝາກໄວ້ຢູ່ຄັງເງິນແຫ່ງຊາດ ເພື່ອຄ້ຳປະກັນການປະ

ມູນ, ການປະຕິບັດໂຄງການ ຫລື ກິດຈະການໃດໜຶ່ງຂອງລັດ ແລະ ເງິນຝາກ ເພື່ອລໍຖ້າການສະສາງບັນຊີ;

14. **ການລົງທຶນທາງດ້ານການເງິນ** ໝາຍເຖິງ ການນໍາໃຊ້ແຫຼ່ງເງິນຂອງຄັງເງິນແຫ່ງຊາດ ເພື່ອລົງທຶນ ດ້ວຍຮູບການປ່ອຍກູ້, ຊື້ຮຸ້ນ, ຊື້ພັນທະບັດ ໃນຕະຫຼາດຫຼັກຊັບເພື່ອໃຫ້ມີຜົນກໍາໄລ.

### ມາດຕາ 4. ຫຼັກການພື້ນຖານ ຂອງວຽກງານຄັງເງິນແຫ່ງຊາດ

ຄັງເງິນແຫ່ງຊາດ ເຄື່ອນໄຫວ ຕາມຫຼັກການພື້ນຖານ ດັ່ງນີ້:

1. ການຄຸ້ມຄອງດ້ານກົງຈັກການຈັດຕັ້ງ, ວຽກງານວິຊາສະເພາະ ແລະ ງົບປະມານຮັບໃຊ້ຂອງຄັງເງິນແຫ່ງຊາດ ຕ້ອງລວມສູນ ຕາມລະບົບສາຍຕັ້ງ ໃນຂອບເຂດທົ່ວປະເທດ;
2. ທຸກແຫຼ່ງເງິນຂອງລັດ ຕ້ອງຄຸ້ມຄອງລວມສູນ, ມີການບັນທຶກລົງບັນຊີ ໃນລະບົບບັນຊີຂອງຄັງເງິນແຫ່ງຊາດ ຜ່ານທະນາຄານຂອງລັດ;
3. ການຮັບເງິນເຂົ້າຄັງເງິນແຫ່ງຊາດ ຕ້ອງກວດກາ, ກວດນັບໃຫ້ຖືກຕ້ອງ, ຄົບຖ້ວນ, ອອກໃບຢັ້ງຢືນຮັບເງິນ ໃຫ້ຜູ້ມາມອບ ແລະ ລົງບັນຊີເປັນສະກຸນເງິນກີບ;
4. ການປະຕິບັດລາຍຈ່າຍງົບປະມານແຫ່ງລັດ ຕ້ອງສັ່ງຈ່າຍ ແລະ ລົງບັນຊີເປັນສະກຸນເງິນກີບ, ມີເງິນໃນແຜນງົບປະມານປະຈໍາສົກປີ, ຖືກຕ້ອງຕາມເປົ້າໝາຍ, ລະບຽບການກ່ຽວກັບການໃຊ້ຈ່າຍງົບປະມານ, ມີການກວດກາ ແລະ ຢັ້ງຢືນຈາກຜູ້ສັ່ງການ ຫຼື ຜູ້ຮັບມອບສິດ;
5. ໃນການສັ່ງຈ່າຍເງິນຂອງລັດ ຜູ້ສັ່ງການ ແລະ ນາຍບັນຊີ, ຜູ້ຄິດໄລ່ ແລະ ນາຍບັນຊີ, ຜູ້ຄິດໄລ່ ແລະ ນາຍຄັງ, ນາຍບັນຊີ ແລະ ນາຍຄັງ ຕ້ອງບໍ່ແມ່ນບຸກຄົນດຽວກັນ, ບໍ່ມີສາຍກ່ຽວພັນທາງດ້ານຄອບຄົວ ແລະ ບໍ່ເປັນຍາດໃກ້ຊິດກັນ;
6. ການບໍລິຫານເງິນ ໃນລະບົບຄັງເງິນແຫ່ງຊາດ ຕ້ອງມີຄວາມຄ່ອງຕົວ, ວ່ອງໄວ, ຍຸຕິທໍາ ແລະ ໂປ່ງໃສ ເພື່ອຮັບປະກັນລາຍຈ່າຍ ຕາມແຜນງົບປະມານປະຈໍາສົກປີ;
7. ທຸກການເຄື່ອນໄຫວວຽກງານຄັງເງິນແຫ່ງຊາດ ຕ້ອງໂປ່ງໃສ, ສາມາດກວດກາ ແລະ ກວດສອບໄດ້ ຢ່າງເປັນປົກກະຕິ ແລະ ເຂັ້ມງວດ.

## ໝວດທີ 2
## ທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່ ແລະ ໂຄງປະກອບການຈັດຕັ້ງຂອງຄັງເງິນແຫ່ງຊາດ

### ມາດຕາ 5. ທີ່ຕັ້ງ ແລະ ພາລະບົດບາດ

ຄັງເງິນແຫ່ງຊາດ ແມ່ນການຈັດຕັ້ງ ທີ່ຂຶ້ນກັບກະຊວງການເງິນ, ມີພາລະບົດບາດ ໃນການຄຸ້ມຄອງ-ບໍລິຫານ ການເຄື່ອນໄຫວວຽກງານຂອງຄັງເງິນແຫ່ງຊາດ ຕາມສາຍຕັ້ງ; ເປັນເສນາທິການ ໃຫ້ກະຊວງການເງິນ ກ່ຽວກັບການຄຸ້ມຄອງຄັງງົບປະມານແຫ່ງລັດ, ບັນດາຄັງອື່ນໆຂອງລັດ, ການລະດົມທຶນ; ເປັນນາຍບັນຊີແຫ່ງລັດ, ສັງລວມແຫຼ່ງເງິນຂອງລັດ ໃຫ້ລວມສູນເຂົ້າບັນຊີຄັງເງິນແຫ່ງຊາດ; ປົກປັກຮັກສາວັດຖຸ ແລະ ເອກະສານມີຄ່າຂອງລັດ ໃຫ້ເປັນເອກະພາບ ໃນຂອບເຂດທົ່ວປະເທດ.

ມາດຕາ 6. **ສິດ ແລະໜ້າທີ່ ຂອງຄັງເງິນແຫ່ງຊາດ**

ຄັງເງິນແຫ່ງຊາດ ມີສິດ ແລະໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳອື່ນ ໃນຂົງເຂດວຽກງານຄັງເງິນແຫ່ງຊາດ ເພື່ອສະເໜີຂັ້ນເທິງພິຈາລະນາ;
2. ໂຄສະນາເຜີຍແຜ່ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳອື່ນ ໃນຂົງເຂດວຽກງານຄັງເງິນແຫ່ງຊາດ;
3. ຄຸ້ມຄອງ, ຄົ້ນຄວ້າ, ນຳສະເໜີຂັ້ນເທິງ ກ່ຽວກັບການແຕ່ງຕັ້ງ, ຍົກຍ້າຍ, ເລື່ອນຊັ້ນ, ເລື່ອນຂັ້ນ, ຍ້ອງຍໍ, ບຳລຸງສ້າງ, ຍົກລະດັບວິຊາສະເພາະ, ປົດຕຳແໜ່ງ, ປະຕິບັດວິໄນ ແລະ ປະຕິບັດນະໂຍບາຍຕ່າງໆ ຕໍ່ພະນັກງານຄັງເງິນແຫ່ງຊາດ ໃນຂອບເຂດທົ່ວປະເທດ;
4. ຄຸ້ມຄອງຄັງງົບປະມານແຫ່ງລັດ, ຫົວໜ່ວຍງົບປະມານ, ອົງການບໍລິຫານວິຊາການ ແລະ ກອງທຶນຂອງລັດ, ປົກປັກຮັກສາວັດຖຸມີຄ່າ ແລະ ເອກະສານມີຄ່າ ຕາມການມອບໝາຍຂອງລັດຖະມົນຕີວ່າການກະຊວງການເງິນ;
5. ບໍລິຫານແຫຼ່ງເງິນ ໃນລະບົບບັນຊີຄັງເງິນແຫ່ງຊາດ ໃຫ້ມີຄວາມຄ່ອງຕົວ ແລະ ສາມາດນຳໃຊ້ແຫຼ່ງເງິນ ໃນລະບົບຄັງເງິນແຫ່ງຊາດ ເພື່ອການລົງທຶນທາງດ້ານການເງິນ ຕາມການຕົກລົງຂອງລັດຖະບານ;
6. ຈັດຕັ້ງປະຕິບັດນະໂຍບາຍລະດົມທຶນຂອງລັດຖະບານ ດ້ວຍການຈຳໜ່າຍພັນທະບັດຢູ່ພາຍໃນ ແລະ ຕ່າງປະເທດ;
7. ບໍລິຫານເງິນຕາຕ່າງປະເທດ ໃຫ້ລວມສູນ ໃນຄັງເງິນແຫ່ງຊາດ ຢູ່ສູນກາງ;
8. ສະເໜີລັດຖະມົນຕີວ່າການກະຊວງການເງິນ ອອກອັດຕາແລກປ່ຽນ ເປັນແຕ່ລະໄລຍະ ບົນພື້ນຖານການກຳນົດອັດຕາແລກປ່ຽນຂອງທະນາຄານ ແຫ່ງ ສປປ ລາວ ເພື່ອເປັນບ່ອນອີງ ໃນການລົງບັນຊີຕັດແຜນລາຍຈ່າຍງົບປະມານປະຈຳປີ ໃຫ້ອົງການຈັດຕັ້ງຂອງລັດ ທີ່ຕ້ອງການໃຊ້ຈ່າຍເງິນຕາຕ່າງປະເທດ;
9. ຈັດວາງລະບົບການບັນຊີ, ສ້າງປຶ້ມຄູ່ມືບັນຊີຄັງເງິນ, ຄຸ້ມຄອງ, ຕິດຕາມກວດກາ ແລະ ສະຫລຸບລາຍງານ ເປັນແຕ່ລະໄລຍະ ໃຫ້ຄົບຖ້ວນ, ຖືກຕ້ອງ ແລະ ທັນການ ຕາມລະບຽບການບັນຊີແຫ່ງລັດ;
10. ເປັນເຈົ້າການ ປະສານສົມທົບກັບອົງການຈັດຕັ້ງທີ່ມີໜ້າທີ່ເກັບລາຍຮັບ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ ໃນການເກັບລາຍຮັບ ແລະ ການຊຳລະລາຍຈ່າຍງົບປະມານແຫ່ງລັດ ຖືກຕ້ອງຕາມລະບຽບກົດໝາຍ ແລະ ຕາມແຜນງົບປະມານແຫ່ງລັດປະຈຳສົກປີ;
11. ຮັບເງິນພັນທະຂອງບຸກຄົນ, ນິຕິບຸກຄົນ ທີ່ມີລາຍຮັບຕິດພັນກັບລາຍຈ່າຍງົບປະມານແຫ່ງລັດ ຕາມໃບສັ່ງມອບ ຂອງອົງການຈັດຕັ້ງເກັບລາຍຮັບ ມອບເຂົ້າງົບປະມານແຫ່ງລັດ ໃຫ້ຄົບຖ້ວນ ແລະ ຫັກເງິນ ຕາມຄຳຕັດສິນຂອງສານ;
12. ກວດກາຄວາມຖືກຕ້ອງ ການປະຕິບັດລາຍຈ່າຍຕາມແຜນງົບປະມານປະຈຳສົກປີ ແລະ ການຊຳລະລາຍຈ່າຍເງິນໃນບັນຊີເງິນຝາກ ທີ່ຝາກໄວ້ໃນລະບົບບັນຊີຄັງເງິນແຫ່ງຊາດ ຕາມການກຳນົດຂອງລະບຽບກົດໝາຍ;
13. ຊຳລະຕົ້ນທຶນເງິນກູ້ຢືມ, ດອກເບ້ຍ ແລະ ຄ່າບໍລິການ ໃຫ້ທະນາຄານຂອງລັດ ຕາມສັນຍາ ແລະ ລະບຽບການ;

14. ເປີດ ແລະ ປິດ ບັນຊີເງິນຝາກຂອງຕົນ ຢູ່ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດຂອງລັດ ເພື່ອປະຕິບັດການເຄື່ອນໄຫວທຸລະກຳດ້ານການເງິນ ບົນພື້ນຖານບັນຊີລວມສູນຂອງຄັງເງິນແຫ່ງຊາດ;
15. ສະເໜີລັດຖະມົນຕີວ່າການກະຊວງການເງິນ ເພື່ອປິດການເຄື່ອນໄຫວບັນຊີເງິນຝາກຂອງຫົວໜ່ວຍງົບປະມານ, ອົງການບໍລິຫານວິຊາການ ແລະ ກອງທຶນຂອງລັດ ທີ່ເປີດໄວ້ຢູ່ທະນາຄານ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງການເງິນ;
16. ຄຸ້ມຄອງຊັບສິນ ແລະ ງົບປະມານຮັບໃຊ້ວຽກງານຄັງເງິນແຫ່ງຊາດ ໃຫ້ລວມສູນຕາມລະບົບສາຍຕັ້ງ;
17. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ແລະ ກວດກາການປະຕິບັດໜ້າທີ່ ຂອງຄັງເງິນແຫ່ງຊາດປະຈຳທ້ອງຖິ່ນ;
18. ພົວພັນ ແລະ ຮ່ວມມືກັບສາກົນໃນຂົງເຂດຄັງເງິນ ຕາມການມອບໝາຍຂອງລັດຖະມົນຕີວ່າການກະຊວງການເງິນ;
19. ສະຫຼຸບ ແລະ ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານວິຊາສະເພາະຂອງຕົນ ໃຫ້ຄົບຖ້ວນ, ຖືກຕ້ອງ ແລະ ທັນຕາມກຳນົດເວລາ ຢ່າງເປັນປົກກະຕິ;
20. ປະຕິບັດສິດ ແລະໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະມົນຕີວ່າການກະຊວງການເງິນ.

**ມາດຕາ 7. ໂຄງປະກອບການຈັດຕັ້ງ**

ໂຄງປະກອບການຈັດຕັ້ງ ຂອງຄັງເງິນແຫ່ງຊາດ ປະກອບດ້ວຍ:

- ຄັງເງິນແຫ່ງຊາດ ສູນກາງ;
- ຄັງເງິນແຫ່ງຊາດ ປະຈຳແຂວງ, ນະຄອນ;
- ຄັງເງິນແຫ່ງຊາດ ປະຈຳເມືອງ, ເທດສະບານ.

ກະຊວງການເງິນ ເປັນຜູ້ຄົ້ນຄວ້າອອກລະບຽບການສະເພາະ ກ່ຽວກັບການຈັດຕັ້ງ ແລະການເຄື່ອນໄຫວຂອງຄັງເງິນແຫ່ງຊາດ ຢູ່ສູນກາງ ແລະ ທ້ອງຖິ່ນ ຕາມເງື່ອນໄຂ ແລະ ສະພາບຕົວຈິງ ໃນແຕ່ລະໄລຍະ.

## ໝວດທີ 3
## ການຄຸ້ມຄອງ-ບໍລິຫານແຫຼ່ງເງິນ ໃນລະບົບຄັງເງິນແຫ່ງຊາດ

**ມາດຕາ 8. ແຫຼ່ງເງິນໃນລະບົບຄັງເງິນແຫ່ງຊາດ**

ແຫຼ່ງເງິນໃນລະບົບຄັງເງິນແຫ່ງຊາດ ປະກອບດ້ວຍ:

1. ເງິນງົບປະມານແຫ່ງລັດ;
2. ເງິນຝາກຂອງຫົວໜ່ວຍງົບປະມານ, ອົງການບໍລິຫານວິຊາການ, ບັນດາກອງທຶນຂອງລັດ, ວິສາຫະກິດຂອງລັດ ແລະ ເງິນຄ້ຳປະກັນໃນລະບົບຄັງເງິນແຫ່ງຊາດ.

**ມາດຕາ 9. ການຄຸ້ມຄອງລາຍຮັບ**

ການຄຸ້ມຄອງລາຍຮັບງົບປະມານແຫ່ງລັດ ໃຫ້ປະຕິບັດດັ່ງນີ້:

1. ຄັງເງິນແຫ່ງຊາດ ປະສານສົມທົບກັບອົງການຈັດຕັ້ງເກັບລາຍຮັບ ເພື່ອຕິດຕາມແຜນການ ເກັບລາຍຮັບ ເປັນແຕ່ລະ ເດືອນ, ງວດ ແລະ ປີ;
2. ຮັບເງິນໃຫ້ຖືກຕ້ອງ, ຄົບຖ້ວນ ຕາມໃບສັ່ງມອບຂອງອົງການຈັດຕັ້ງເກັບລາຍຮັບ ຫຼື ໃບແຈ້ງມອບພັນທະດ້ວຍຕົນເອງຂອງບຸກຄົນ, ນິຕິບຸກຄົນ ເຂົ້າບັນຊີຂອງຄັງເງິນແຫ່ງຊາດ ຜ່ານລະບົບທະນາຄານຂອງລັດ, ຍົກເວັ້ນເຂດຫ່າງໄກສອກຫຼີກ ບ່ອນທີ່ບໍ່ມີທະນາຄານຕັ້ງຢູ່;
3. ເປີດບັນຊີຕິດຕາມປະເພດລາຍຮັບ ຢູ່ຄັງເງິນແຫ່ງຊາດ ແຍກພູດສູນກາງ, ພູດທ້ອງຖິ່ນ, ພູດແບ່ງປັນ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ, ແຍກຕາມຂະແໜງການ ແລະ ຕາມສາລະບານງົບປະມານ;
4. ລາຍຮັບງົບປະມານແຫ່ງລັດ ໃຫ້ຄິດໄລ່ ແລະ ບັນທຶກລົງບັນຊີ ເປັນສະກຸນເງິນກີບ, ໃນກໍລະນີທີ່ລາຍຮັບເປັນສະກຸນເງິນຕາຕ່າງປະເທດ ຕາມສັນຍາ ໃຫ້ຮັບເປັນສະກຸນເງິນຕາຕ່າງປະເທດ ແຕ່ຄິດໄລ່ ແລະ ລົງບັນຊີເປັນສະກຸນເງິນກີບ ຕາມອັດຕາແລກປ່ຽນຊື້ ໃນມື້ທີ່ມີທຸລະກຳເກີດຂຶ້ນ ຂອງທະນາຄານຂອງລັດ ທີ່ບໍລິການໃຫ້ຄັງເງິນແຫ່ງຊາດ;
5. ການມອບລາຍຮັບ ຕ້ອງປະກອບເອກະສານໃຫ້ຖືກຕ້ອງ, ຄົບຖ້ວນ ຕາມປະເພດລາຍຮັບ ແລະ ຕາມສາລະບານງົບປະມານແຫ່ງລັດ.

**ມາດຕາ 10. ການຄຸ້ມຄອງລາຍຈ່າຍ**

ການຄຸ້ມຄອງລາຍຈ່າຍງົບປະມານແຫ່ງລັດ ໃຫ້ປະຕິບັດດັ່ງນີ້:
1. ມີໃນແຜນງົບປະມານປະຈຳສົກປີ, ຖືກຕ້ອງຕາມເປົ້າໝາຍ, ສາລະບານງົບປະມານ ແລະ ບັນທຶກລົງບັນຊີ ໃຫ້ຖືກຕ້ອງ ຕາມລະບຽບການ;
2. ມີການເຫັນດີຈາກຜູ້ສັ່ງການ ຫລື ຜູ້ຖືກມອບສິດ;
3. ກ່ອນການຈ່າຍເງິນ ຕ້ອງກວດກາເອກະສານຢັ້ງຢືນລາຍຈ່າຍ ໃຫ້ຖືກຕ້ອງ, ຄົບຖ້ວນ ຕາມລະບຽບການກ່ຽວກັບການກວດກາເອກະສານລາຍຈ່າຍງົບປະມານແຫ່ງລັດ ຜ່ານລະບົບຄັງເງິນແຫ່ງຊາດ;
4. ການຈ່າຍເງິນງົບປະມານແຫ່ງລັດ ໃຫ້ຈ່າຍ ແລະ ລົງບັນຊີ ເປັນສະກຸນເງິນກີບ. ໃນກໍລະນີທີ່ຕ້ອງການຈ່າຍເປັນເງິນຕາຕ່າງປະເທດ ຕ້ອງຊື້ເງິນຕາຕ່າງປະເທດໃນລະບົບຄັງເງິນແຫ່ງຊາດ ໂດຍອີງໃສ່ອັດຕາແລກປ່ຽນຕົວຈິງໃນແຕ່ລະໄລຍະຂອງທະນາຄານ;
5. ການປະຕິບັດລາຍຈ່າຍ ຂອງຫົວໜ່ວຍງົບປະມານທີ່ມີລາຍຮັບວິຊາການ ແລະ ບັນດາກອງທຶນຂອງລັດ ຕ້ອງຜ່ານບັນຊີ ຂອງຄັງເງິນແຫ່ງຊາດ;
6. ເອກະສານຢັ້ງຢືນການຈ່າຍເງິນ ຕ້ອງໄດ້ເກັບມ້ຽນໃຫ້ຄົບຖ້ວນ ຕາມລະບຽບການ ເພື່ອເປັນບ່ອນອີງໃນການກວດກາ.

**ມາດຕາ 11. ການຄຸ້ມຄອງ ເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ ຈາກພາຍໃນ ແລະ ຕ່າງປະເທດ**

ການຄຸ້ມຄອງ ເງິນກູ້ຢືມ ແລະຊ່ວຍເຫຼືອລ້າ ຈາກພາຍໃນ ແລະ ຕ່າງປະເທດ ປະຕິບັດດັ່ງນີ້:
1. ຫົວໜ່ວຍງົບປະມານທຸກຂັ້ນ ທີ່ຄຸ້ມຄອງເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ ຈາກພາຍໃນ ແລະ ຕ່າງປະເທດ ຕ້ອງສັງລວມລາຍຮັບ ແລະ ລາຍຈ່າຍ ເຂົ້າໃນແຜນງົບປະມານຂອງຕົນ ແລະ ສົ່ງໃຫ້ກະຊວງການເງິນ;